# ແຜນການສອນ ເພດສຶກສາ

## ສຳລັບອາຊີຕາເວັນອອກສຽງໃຕ້ ຂອງ amaze

ການຂົ່ມເຫງ

ແມ່ນຫຍັງ?



amaze · Advocates for Youth (Rights. Respect. Responsibility.) · UNESCO · UNFPA

# ກ່ຽວກັບບົດຮຽນບົດນີ້...

ແຜນການສອນນີ້ ແມ່ນຫນຶ່ງໃນຊຸດແຜນການສອນທີ່ມີ 9 ບົດແຍກ ທີ່ເປັນຕົ້ນສະບັບ ເພື່ອສະໜັບສະໜູນການສອນວິຊາເພດສຶກສາ ໃນໂຮງຮຽນ ຫຼື ນອກໂຮງຮຽນ ໃນອາຊີຕາເວັນອອກສຽງໃຕ້. ແຜນການສອນຕົ້ນສະບັບນີ້ ຖືກອອກແບບມາເພື່ອລວມເຂົ້າໃຊ້ໃນຊຸດວິດີໂອເພື່ອການສຶກສາຂອງ AMAZE ທີ່ກ່ຽວຂ້ອງກັບຫົວຂໍ້ແຜນການສອນ ແລະ ສາມາດນຳໃຊ້ເພື່ອເສີມກັບແຜນການສອນ ຫຼື ແຫຼ່ງຂໍ້ມູນ ທີ່ມີຢູ່ແລ້ວ ທີ່ທ່ານອາດໃຊ້ໃນການນຳສະເໜີວິຊາເພດສຶກສາ.

ຕາມຫຼັກການແລ້ວ, ການຮຽນຮູ້ກ່ຽວກັບຫົວຂໍ້ເພດສຶກສາສະເພາະໃດໜຶ່ງ ຄວນໃຫ້ຜູ້ຮຽນມີໂອກາດໄດ້ພັດທະນາ, ນຳໃຊ້ ແລະ ຝຶກຝົນການຮຽນຮູ້ ໃນແງ່ຂອງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ໃນແຜນການສອນເຫຼົ່ານີ້ ພວກເຮົາໄດ້ຍົກຕົວຢ່າງຜົນການຮຽນຮູ້ເບື້ອງຕົ້ນພຽງຈຳນວນໜຶ່ງທີ່ສາມາດກຳນົດເປົ້າຫມາຍໄດ້ ໂດຍຄຳນຶງວ່າບົດຮຽນພຽງບົດດຽວ ມັກຈະບໍ່ພຽງພໍທີ່ຈະບັນລຸ ຜົນການຮຽນໃດໜຶ່ງໄດ້ຢ່າງເລິກເຊິ່ງ ຫຼື ກວມເອົາຫຼາຍກວ່າຫນຶ່ງຂົງເຂດການຮຽນຮູ້ໄດ້. ເຮົາຊຸກຍູ້ໃຫ້ຄູຈັດຕາຕະລາງເວລາ ໃຫ້ມີການສອນບົດຮຽນຕິດຕາມເພີ່ມເຕີມ ເພື່ອສົ່ງເສີມຜົນການຮຽນຮູ້ທີ່ເປັນຈຸດປະສົງຂອງບົດຮຽນເພດສຶກສາເຫຼົ່ານີ້, ແລະ ໃຊ້ປະໂຫຍດຈາກໂອກາດອື່ນໆ ທັງຢູ່ໃນ ແລະ ນອກຫ້ອງຮຽນ ທີ່ຊ່ວຍໃຫ້ຜູ້ຮຽນສາມາດສະທ້ອນທັດສະນະຄະຕິ ແລະ ຝຶກຝົນ ແລະ ເສີມສ້າງທັກສະ.

TH/DOC/HWT-IQE/23/002-LA-1

# ການຂົ່ມເຫັງແມ່ນຫຍັງ?

*ແຜນການສອນ*
*ເພດສຶກສາ ຂອງ* **amaze**

## ຄວາມສອດຄ່ອງກັບ ຄຳແນະນຳສາກົນ ດ້ານວິຊາການກ່ຽວກັບເພດສຶກສາ

**ແນວຄວາມຄິດຫຼັກທີ 1:** ຄວາມສຳພັນ.

- **ຫົວຂໍ້ 1.3:** ຄວາມອົດທົນ, ການກວມລວມ ແລະ ການເຄົາລົບ, ອາຍຸ 9-12 ປີ

**ແນວຄວາມຄິດຫຼັກທີ 4:** ຄວາມຮຸນແຮງ ແລະ ການຢູ່ຢ່າງປອດໄພ

- **ຫົວຂໍ້ 4.1:** ຄວາມຮຸນແຮງ; ອາຍຸ 9-12 ປີ

## ຄວາມຮູ້ພື້ນຖານຂອງນັກຮຽນ

ນັກຮຽນໄດ້ຮຽນຮູ້ກ່ຽວກັບຄວາມຮຸນແຮງປະເພດຕ່າງໆ ແລະ ຮຽນຮູ້ວ່າຄົນທຸກຄົນ ລ້ວນແຕ່ມີເອກະລັກ ແລະ ມີຄຸນຄ່າ.

## ກຸ່ມອາຍຸເປົ້າໝາຍ

ຊັ້ນມັດທະຍົມສຶກສາປີທີ 2-3 (ອາຍຸປະມານ 10-14 ປີ)

## ເວລາ

45 ນາທີ

## ການກະກຽມຂອງຄູ

- ເຂົ້າເຖິງ ແລະ ເບິ່ງຕົວຢ່າງ ວິດີໂອກ່ຽວກັບ ການຂົ່ມເຫັງແມ່ນຫຍັງ ເພື່ອໃຫ້ລຶ້ງເຄີຍກັບເນື້ອຫາ. ຖ້າທ່ານບໍ່ລຶ້ງເຄີຍກັບ ຄຳວ່າ ການຂົ່ມເຫັງ, ໃຫ້ທ່ານລອງຄົ້ນຫາຫົວຂໍ້ດັ່ງກ່າວ. ນີ້ແມ່ນບົດລາຍງານເພື່ອອ່ານເພີ່ມຕື່ມ, **ເບື້ອງຫຼັງຕົວເລກ ການຢຸດຕິຄວາມຮຸນແຮງ ແລະ ການຂົ່ມເຫັງ** (Behind the Numbers Ending School Violence and Bullying), ໂດຍ ອຸຍແນສໂກ.

- ທົດສອບເປີດວິດີໂອເພື່ອໃຫ້ກຽມພ້ອມເບິ່ງໃນລະຫວ່າງການຂຶ້ນສອນ, ບໍ່ວ່າຈະເປັນການວາງລຳດັບການເປີດຈົນຮອດຕອນເລີ່ມຕົ້ນ (ເພື່ອຫຼີກລ່ຽງໂຄສະນາ) ໃນ YouTube, ອອກຈາກ **ລາຍການຫຼິ້ນຂອງ** AMAZE, ຫຼື ສະບັບທີ່ໄດ້ດາວໂຫຼດມາ. ພິຈາລະນາເລືອກໃຊ້ **ລູກຫຼິ້ນຄວາມໄວຂອງ** YouTube ເພື່ອປັບຄວາມໄວຂອງວິດີໂອເພື່ອໃຫ້ແທດເໝາະທີ່ສຸດສຳລັບນັກຮຽນ.

- ສຳເນົາເອກະສານແຈກຢາຍນັກຮຽນ: ຕົວຢ່າງຂອງການຂົ່ມເຫັງ - ໜຶ່ງຊຸດຕໍ່ນັກຮຽນ 1 ກຸ່ມ ແລະ ແຕ່ລະກຸ່ມປະກອບດ້ວຍນັກຮຽນ 3-4 ຄົນ.

- ສຳເນົາແຜ່ນວຽກບົດຝຶກຫັດສຳລັບນັກຮຽນ: ການຂົ່ມເຫັງ - ໜຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ.

## ອຸປະກອນ/ເອກະສານທີ່ຕ້ອງການ

- ຄອມພິວເຕີ ທີ່ສາມາດເຂົ້າເຖິງອິນເຕີເນັດ ແລະ ລຳໂພງ
- ເຄື່ອງສາຍ LCD ແລະ ຈໍ
- ລິ້ງວິດີໂອ: https://youtu.be/00daK2jnghc
- ສໍຂາວ ແລະ ກະດານດຳ
- ເອກະສານສຳລັບແຈກຢາຍນັກຮຽນ: ຕົວຢ່າງຂອງການຂົ່ມເຫັງ
- ແຜ່ນວຽກບົດຝຶກຫັດສຳລັບນັກຮຽນ: ການຂົ່ມເຫັງ



## ຈຸດປະສົງການຮຽນຮູ້

ໃນຕອນທ້າຍຂອງບົດຮຽນນີ້, ນັກຮຽນຈະສາມາດ:

1. ນິຍາມຄວາມໝາຍຂອງການຂົ່ມເຫັງ. (ຄວາມຮູ້)
2. ອະທິບາຍປະເພດຕ່າງໆຂອງການຂົ່ມເຫັງ. (ຄວາມຮູ້)
3. ລະບຸຢ່າງໜ້ອຍສອງວິທີສຳລັບການຕອບໂຕ້ກັບການຂົ່ມເຫັງ. (ຄວາມຮູ້)
4. ຮັບຮູ້ວ່າການຂົ່ມເຫັງນັ້ນເຈັບປວດ. (ທັດສະນະຄະຕິ)

* **ໝາຍເຫດສຳລັບຄູ:** ບົດຮຽນນີ້ອາດຈະເຮັດໃຫ້ນັກຮຽນທີ່ກຳລັງຖືກ ຫຼື ເຄີຍຖືກຂົ່ມເຫັງ ຮູ້ສຶກເຈັບປວດ. ຈົ່ງແຈ້ງໃຫ້ນັກຮຽນຮູ້ວ່າ ເຂົາເຈົ້າສາມາດລົມກັບທ່ານສ່ວນຕົວ ຫຼັງຈາກເລີກຮຽນໄດ້ ຖ້າເຂົາເຈົ້າຕ້ອງການ ແລະ ກຽມພ້ອມທີ່ຈະສົ່ງຕໍ່ໄປຍັງທີ່ປຶກສາ ຫຼື ການບໍລິການສຸຂະພາບຕາມຄວາມຈຳເປັນ. ກຽມພ້ອມທີ່ຈະຮັບມືກັບນັກຮຽນທີ່ອາດຈະເລີ່ມເປີດເຜີຍປະສົບການສ່ວນຕົວ ກ່ຽວກັບການຂົ່ມເຫັງ ໃນລະຫວ່າງບົດຮຽນ ຫຼື ຊີ້ໃຫ້ເຫັນຜູ້ກະທຳຜິດ ໂດຍການຮັບຮູ້ສິ່ງທີ່ເຂົາເຈົ້າແບ່ງປັນ ແລະ ບອກໃຫ້ພວກເຂົາຮູ້ວ່າພວກເຂົາສາມາດໂອ້ລົມກັບທ່ານໄດ້ຫຼັງເລີກຮຽນ.

## ຂັ້ນຕອນ

### ຂັ້ນຕອນທີ 1

ອະທິບາຍວ່າທ່ານຮູ້ວ່ານັກຮຽນຫຼາຍຄົນ ອາດຈະຮູ້ບາງຢ່າງກ່ຽວກັບການຂົ່ມເຫັງ, ບໍ່ວ່າພວກເຂົາຈະໄດ້ຮຽນຮູ້ກ່ຽວກັບການຂົ່ມເຫັງໃນໄລຍະທີ່ຮຽນຢູ່ໃນໂຮງຮຽນ ຫຼື ຢູ່ນອກໂຮງຮຽນກໍຕາມ; ເຖິງຢ່າງນັ້ນ, ບາງຄັ້ງຜູ້ໃຫຍ່ອາດຈະບໍ່ຄຸ້ນເຄີຍກັບຄວາມໝາຍຂອງການຂົ່ມເຫັງ ຫຼື ອາດບໍ່ຈິງຈັງກັບມັນສະເໝີໄປ. ອະທິບາຍວ່າການຂົ່ມເຫັງແມ່ນການສະແດງອອກຂອງຄວາມຮຸນແຮງ ແລະ ໃນມື້ນີ້ທ່ານຈະໄດ້ທົບທວນຄືນວ່າການຂົ່ມເຫັງແມ່ນຫຍັງ, ປະເພດຕ່າງໆຂອງການຂົ່ມເຫັງ, ແລະ ສິ່ງທີ່ຕ້ອງເຮັດຖ້າຫາກປະສົບ ຫຼື ພົບເຫັນການຂົ່ມເຫັງ. (2 ນາທີ)

### ຂັ້ນຕອນທີ 2




ກ່ອນອື່ນໝົດ, ໃຫ້ສະແດງວິດີໂອຂອງ AMAZE ທີ່ມີຄວາມຍາວ 2 ນາທີເຄິ່ງ ກ່ຽວກັບ ການຂົ່ມເຫັງແມ່ນຫຍັງ?: https://bit.ly/_whatisbullying. ເມື່ອເບິ່ງວິດີໂອຈົບແລ້ວ, ຖາມວ່າໃຜມີຄຳຖາມບໍ່. ຫຼັງຈາກນັ້ນ ໃຫ້ເວົ້າວ່າ, **"ວິດີໂອ ຊ່ວຍໃຫ້ພວກເຮົາເຂົ້າໃຈເພີ່ມຂຶ້ນກ່ຽວກັບການຂົ່ມເຫັງ, ເລີ່ມຈາກການບອກພວກເຮົາວ່າມັນແມ່ນຫຍັງ - ພຶດຕິກຳທີ່ເປັນການທຳຮ້າຍ, ສ້າງຄວາມເສຍຫາຍ, ຫຼື ເຮັດໃຫ້ຄົນອັບອາຍ."** ໃນຂະນະທີ່ທ່ານແບ່ງປັນຄຳນິຍາມນີ້ໃຫ້ທ່ານຂຽນມັນໃສ່ກະດານດຳ. ຫຼັງຈາກນັ້ນ, ເວົ້າວ່າ, **"ວິດີໂອຍັງໄດ້ເວົ້າກ່ຽວກັບການຂົ່ມເຫັງບາງປະເພດ. ມີໃຜສາມາດບອກຄູກ່ຽວກັບ ບາງປະເພດຂອງການຂົ່ມເຫັງທີ່ໄດ້ເວົ້າເຖິງ ໄດ້ບໍ່?"** ກວດເບິ່ງປະເພດຂອງການຂົ່ມເຫັງ ແລະ ຕົວຢ່າງສຳລັບແຕ່ລະປະເພດ:

- ການຂົ່ມເຫັງດ້ວຍການກະທຳ, ເຊິ່ງລວມເຖິງການຂົ່ມເຫັງທາງຮ່າງກາຍ ເຊັ່ນ: ການຍູ້, ເຕະ, ຕີ, ຫຼື ການທຳລາຍຊັບສິນ.
- ການຂົ່ມເຫັງດ້ວຍວາຈາ ເຊັ່ນ: ການເອີ້ນຊື່, ການດູຖູກ, ຫຼື ການເຍາະເຍີ້ຍ.
- ການຂົ່ມເຫັງແບບບໍ່ໃຫ້ຄວາມສົນໃຈ ເຊັ່ນ: ການຕັ້ງໃຈເຮັດບໍ່ສົນໃຈຜູ້ໃດຜູ້ໜຶ່ງ ແລະ ການບໍ່ເຊື້ອເຊີນເຂົາເຈົ້າເຂົ້າຮ່ວມກິດຈະກຳຕ່າງໆ.
- ການຂົ່ມເຫັງທາງອິນເຕີເນັດ ເຊັ່ນ: ຂໍ້ຄວາມ, ອີເມວ ຫຼື ໂພສ, ຮູບພາບ ຫຼື ວິດີໂອ ທີ່ດູຖູກ ຫຼື ທຳຮ້າຍຈິດໃຈ, ຫຼື ເຈດຕະນາກີດກັນຄົນອື່ນທາງອອນລາຍ.

ຂະນະທີ່ນັກຮຽນແບ່ງປັນກ່ຽວກັບປະເພດຂອງການຂົ່ມເຫັງທີ່ພວກເຂົາເຄີຍໄດ້ຍິນ, ໃຫ້ທ່ານຂຽນໃສ່ເທິງກະດານ. (8 ນາທີ)

**ໝາຍເຫດສຳລັບຄູ:** ໃນບາງກໍລະນີ, ອາດມີການໃຊ້ພາສາ ຫຼື ເລື່ອງຕະຫຼົກທີ່ບໍ່ເໝາະສົມ ເກີດຂຶ້ນໃນໝູ່ນັກຮຽນ. ຖ້າເຫດການນີ້ເກີດຂຶ້ນ, ທ່ານຄວນຂັດຂວາງສະຖານະການນັ້ນ, ຂໍໃຫ້ນັກຮຽນຢຸດ, ແລະ ແກ້ໄຂພຶດຕິກຳທີ່ບໍ່ເໝາະສົມກັບນັກຮຽນເຫຼົ່ານັ້ນຫຼັງຈາກເລີກຮຽນ.

## ຂັ້ນຕອນທີ 3

ຕໍ່ໄປ, ໃຫ້ຖາມນັກຮຽນວ່າ, **"ເປັນຫຍັງບາງຄົນຈຶ່ງຂົ່ມເຫັງຄົນອື່ນ?"** ເມື່ອນັກຮຽນມີໂອກາດຄົ້ນຄິດ ແລະ ຕອບແລ້ວ, ຖ້າວ່າບໍ່ໄດ້ກ່າວເຖິງ, ໃຫ້ຍ້ຳຕື່ມວ່າ ຜູ້ທີ່ຂົ່ມເຫັງຊອກຫາວິທີທີ່ຈະຄວບຄຸມຄົນອື່ນ ເພື່ອເຮັດໃຫ້ຕົນເອງເບິ່ງມີອຳນາດຂຶ້ນ ເຊິ່ງຜົນທີ່ຕາມມາແມ່ນຜູ້ຕົກເປັນເຫຍື່ອຈາກການຂົ່ມເຫັງ ອາດຮູ້ສຶກເຈັບປວດ ແລະ ຮູ້ສຶກຖືກທຳຮ້າຍທາງດ້ານຈິດໃຈ ແລະ ທາງຮ່າງກາຍ.

ຈາກນັ້ນ, ໃຫ້ຈັດນັກຮຽນອອກເປັນກຸ່ມ ໃຫ້ມີ 3 ຫາ 4 ຄົນຕໍ່ກຸ່ມ ແລະ ແຈກຢາຍສຳເນົາເອກະສານ: ຕົວຢ່າງຂອງການຂົ່ມເຫັງ ໃຫ້ນັກຮຽນ. ອະທິບາຍວ່າດ້ານໜຶ່ງມີໂຄງຮ່າງຂອງເພດຍິງ ແລະ ອີກດ້ານໜຶ່ງມີໂຄງຮ່າງຂອງເພດຊາຍ. ຂໍໃຫ້ນັກຮຽນຂຽນຕົວຢ່າງຂອງການຂົ່ມເຫັງໃນແຕ່ລະດ້ານຂອງເຈ້ຍ (ດັ່ງທີ່ລະບຸກ່ອນຫນ້ານີ້ ຫຼື ທີ່ເຫັນໃນວິດີໂອ) ແລະ ຢູ່ດ້ານໃນຂອງເຈ້ຍ, ໃຫ້ຂຽນຄວາມຮູ້ສຶກທັງຫມົດ ທີ່ຜູ້ຖືກຂົ່ມເຫັງອາດຮູ້ສຶກຍ້ອນການຂົ່ມເຫັງ - **"ການຖືກຂົ່ມເຫັງເຮັດໃຫ້ຄົນຮູ້ສຶກແນວໃດ?"**.

ຂໍໃຫ້ສະມາຊິກໃນກຸ່ມລາຍງານຄືນກ່ຽວກັບສິ່ງທີ່ເຂົາເຈົ້າສັງເກດເຫັນຈາກການເຮັດບົດຝຶກຫັດນີ້. ເບິ່ງຄືນເພື່ອປຽບທຽບ ການຂົ່ມເຫັງທີ່ເກີດຂຶ້ນໂດຍຜູ້ຊາຍ, ຜູ້ຍິງ ແລະ ໄວຫນຸ່ມທີ່ແປງເພດ.

ຈຶ່ງຖາມຄຳຖາມຕໍ່ໄປນີ້:

- ຮູ້ສຶກແນວໃດໃນການເຮັດກິດຈະກຳນີ້?
- ມີວິທີໃດແດ່ທີ່ຄົນສາມາດຖືກຂົ່ມເຫັງໄດ້?
- ເຈົ້າສັງເກດເຫັນຮູບແບບໃດໜຶ່ງ ໃນວິທີທີ່ຄົນເຮົາອາດປະສົບກັບການຖືກຂົ່ມເຫັງບໍ່?
- ມັນມີຄວາມຄ້າຍຄື ແລະ ຕ່າງກັນແນວໃດ ສຳລັບ ຜູ້ຍິງ, ຜູ້ຊາຍ ແລະ ໄວຫນຸ່ມທີ່ແປງເພດ?

(20 ນາທີ)

## ຂັ້ນຕອນທີ 4

ຕໍ່ໄປ, ໃຫ້ແຕ້ມຕາຕະລາງຄືດັ່ງລຸ່ມນີ້ໃສ່ກະດານ ໂດຍໃຫ້ມີສອງຖັນ ແລະ ສອງຫົວຂໍ້ຄືດັ່ງນີ້:

| ເຈົ້າຈະເຮັດແນວໃດ ເມື່ອເຈົ້າກຳລັງຖືກຂົ່ມເຫັງ? | ເຈົ້າຈະສາມາດເຮັດຫຍັງໄດ້ແດ່ເພື່ອເປັນການຊ່ວຍເຫຼືອຄົນທີ່ກຳລັງຖືກຂົ່ມເຫັງ? |
|---|---|
| | |

ອະທິບາຍວ່າຕອນນີ້ ເຮົາໄດ້ເວົ້າກ່ຽວກັບປະເພດຕ່າງໆຂອງການຂົ່ມເຫັງ ແລະ ຮູບແບບທີ່ຄົນເຮົາອາດປະສົບກັບການຂົ່ມເຫັງ, ຕໍ່ໄປ ທ່ານຈະເວົ້າເຖິງສິ່ງທີ່ຕ້ອງເຮັດກ່ຽວກັບເລື່ອງນີ້. ໃຫ້ຖາມນັກຮຽນວ່າ, **"ຄົນໆໜຶ່ງຈະເຮັດແນວໃດຖ້າເຂົາເຈົ້າຖືກຂົ່ມເຫັງ?"** ໃຫ້ຂຽນຄໍາຕອບຂອງນັກຮຽນຢູ່ເບື້ອງຊ້າຍຂອງຕາຕະລາງ. ຈາກນັ້ນຖາມວ່າ, “**ຄົນໆໜຶ່ງຈະເຮັດແນວໃດ ຖ້າເຂົາເຈົ້າເຫັນວ່າມີຄົນຖືກຂົ່ມເຫັງ?**”.

ກວດຄືນຄໍາຕອບເຫຼົ່ານີ້:

| **ຄົນໆໜຶ່ງຈະເຮັດແນວໃດຖ້າເຂົາເຈົ້າຖືກຂົ່ມເຫັງ ຫຼື ຖືກຂົ່ມເຫັງທາງອິນເຕີເນັດ?** | **ຄົນໆໜຶ່ງຈະເຮັດແນວໃດເພື່ອຊ່ວຍເຫຼືອຄົນທີ່ກໍາລັງຖືກຂົ່ມເຫັງ ຫຼື ຖືກຂົ່ມເຫັງທາງອິນເຕີເນັດ?** |
|---|---|
| ● ແນມເບິ່ງຄົນທີ່ກໍາລັງຂົ່ມເຫັງເຈົ້າ ແລະ ບອກໃຫ້ພວກເຂົາຢຸດ ດ້ວຍນໍ້າສຽງທີ່ສະຫງົບ ແລະ ຈະແຈ້ງ.<br>● ຖ້າການເວົ້າ ເປັນສິ່ງທີ່ຍາກເກີນໄປ ຫຼື ບໍ່ປອດໄພ, ໃຫ້ຍ່າງໜີ ແລະ ຂໍຄວາມຊ່ວຍເຫຼືອ.<br>● ບອກໝູ່ ຫຼື ຊອກຫາຜູ້ປົກຄອງ, ຄູ ຫຼື ທີ່ປຶກສາ<br>● ຖ້າເຈົ້າຖືກຂົ່ມເຫັງທາງອິນເຕີເນັດ:<br>• ຢ່າມີສ່ວນຮ່ວມໃດໆເມື່ອໄດ້ຮັບຂໍ້ຄວາມ-ຢ່າຕອບ ແລະຢ່າສົ່ງຕໍ່ຂໍ້ຄວາມຫາຜູ້ອື່ນ<br>• ບລັອກໝາຍເລກໂທລະສັບເທິງໂທລະສັບມືຖືຂອງເຈົ້າ<br>• ຍົກເລີກການເປັນໝູ່ກັບຄົນໆ ນັ້ນໃນສື່ສັງຄົມອອນລາຍ<br>• ພະຍາຍາມຮວບຮວມຕົວຢ່າງການຂົ່ມເຫັງທາງອິນເຕີເນັດໃຫ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້ ໂດຍການບັນທຶກຂໍ້ຄວາມ, ໂພສ ຫຼື ຮູບພາບ<br>• ບອກໝູ່ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້ | ● ສະແດງການສະໜັບສະໜູນຄົນທີ່ກໍາລັງຖືກຂົ່ມເຫັງ ໂດຍການເຮັດດີກັບພວກເຂົາຕໍ່ໜ້າຜູ້ທີ່ຂົ່ມເຫັງ<br>● ຂັດຂວາງການຂົ່ມເຫັງ ໂດຍການຂໍໃຫ້ຜູ້ຖືກຂົ່ມເຫັງມາເຮັດບາງຢ່າງກັບເຈົ້າ<br>● ບອກກັບຜູ້ທີ່ຂົ່ມເຫັງວ່າ ສິ່ງທີ່ພວກເຂົາເຮັດມັນບໍ່ດີ ແລະ ຂໍໃຫ້ຢຸດ<br>● ບອກຄູ, ພໍ່ແມ່, ທີ່ປຶກສາ ຫຼື ຜູ້ໃຫຍ່ທີ່ເຊື່ອຖືໄດ້<br>● ຖ້າເຈົ້າຮູ້ຈັກໃຜທີ່ຖືກຂົ່ມເຫັງທາງອິນເຕີເນັດ, ຈົ່ງເຮັດດີກັບຄົນໆນັ້ນ ເພື່ອພວກເຂົາຈະບໍ່ຮູ້ສຶກໂດດດ່ຽວ, ຊຸກຍູ້ໃຫ້ພວກເຂົາບອກຜູ້ໃຫຍ່ທີ່ເຊື່ອຖືໄດ້, ແລະ ແບ່ງປັນເຄັດລັບຕ່າງໆ ເຊັ່ນ: ວິທີທີ່ພວກເຂົາສາມາດບລັອກໝາຍເລກໂທລະສັບ, ເຊົາເປັນໝູ່ຜູ້ຂົ່ມເຫັງ ແລະ ບໍ່ຕ້ອງຕອບກັບ. |

(8 ນາທີ)

## ຂັ້ນຕອນທີ 5

ຂອບໃຈນັກຮຽນສໍາລັບຄໍາຕອບຂອງພວກເຂົາ. ສະຫຼຸບບົດຮຽນໂດຍການກ່າວເຖິງປະເດັນທີ່ສັງລວມຂ້າງລຸ່ມນີ້ ແລະ ຂໍໃຫ້ນັກຮຽນໃຊ້ເວລາສອງສາມນາທີເພື່ອເຮັດໃຫ້ສໍາເລັດ ແລະ ສົ່ງແຜ່ນວຽກບົດຝຶກຫັດຂອງນັກຮຽນ: ການຂົ່ມເຫັງ ໃຫ້ແກ່ຄູ. (7 ນາທີ)

**ໝາຍເຫດສໍາລັບຄູ:** ກວດເບິ່ງໃຫ້ແນ່ໃຈວ່າ ທ່ານໄດ້ລຶບຂໍ້ມູນທັງໝົດທີ່ຂຽນໄວ້ເທິງກະດານ ກ່ອນທີ່ຈະຢາຍເຈ້ຍບົດຝຶກຫັດໃຫ້ນັກຮຽນ.

## ສະຫຼຸບປະເດັນທີ່ສຳຄັນ

- ການຂົ່ມເຫັງແມ່ນເມື່ອຜູ້ໃດຜູ້ໜຶ່ງທຳຮ້າຍ, ສ້າງຄວາມເສຍຫາຍ ຫຼື ເຮັດໃຫ້ຜູ້ໃດຜູ້ໜຶ່ງອັບອາຍ ເພື່ອໃຫ້ຕົນເອງຮູ້ສຶກມີອຳນາດ.
- ໃນຫຼາຍໆແຫ່ງ ຜູ້ຊາຍ, ຜູ້ຍິງ ແລະ ໄວໜຸ່ມທີ່ແປງເພດອາດຈະປະສົບກັບການຂົ່ມເຫັງແຕກຕ່າງກັນ.
- ການຂົ່ມເຫັງມີຫຼາຍປະເພດ ແລະ ມັນເປັນການດີທີ່ຈະຮັບຮູ້ເມື່ອມັນເກີດຂຶ້ນ ເພື່ອໃຫ້ສາມາດດຳເນີນການເພື່ອປົກປ້ອງຕົນເອງ ຫຼື ຄົນອື່ນ.
- ຖ້າເຈົ້າຖືກຂົ່ມເຫັງ ຫຼື ເຫັນຜູ້ອື່ນຖືກຂົ່ມເຫັງ, ມີຫຼາຍສິ່ງທີ່ເຈົ້າສາມາດເຮັດເພື່ອປົກປ້ອງຕົນເອງ ຫຼື ຊ່ວຍເຫຼືອຜູ້ອື່ນ.

## ທາງເລືອກສຳລັບການປະເມີນຈຸດປະສົງການຮຽນຮູ້ໃນຂະນະສະຫຼຸບບົດຮຽນ

ແຈກຢາຍແຜ່ນວຽກບົດຝຶກຫັດ: ການຂົ່ມເຫັງ ໃຫ້ນັກຮຽນໃນຕອນທ້າຍຂອງຊົ່ວໂມງຮຽນ ແລະ ຂໍໃຫ້ນັກຮຽນຕອບຄຳຖາມ ແລະ ສົ່ງໃຫ້ຄູກ່ອນອອກຈາກຫ້ອງຮຽນ.

## ຄຳແນະນຳໃນການປັບປ່ຽນສຳລັບການຮຽນການສອນທາງໄກ

ໃນກໍລະນີທີ່ເປັນການສອນທາງໄກ, ນຳໃຊ້ລະບົບດິຈິຕອນເຊັ່ນ Google Classroom ຫຼື Zoom ແລະ ບັນທຶກຄຳຕອບຂອງນັກຮຽນໃສ່ກະດານອອນລາຍ. ນັກຮຽນສາມາດແບ່ງອອກເປັນກຸ່ມທາງອອນລາຍ ເພື່ອເຮັດບົດຝຶກຫັດເປັນກຸ່ມ ກ່ຽວກັບຕົວຢ່າງຂອງການຂົ່ມເຫັງ ຢູ່ໃນເອກະສານ Google ທີ່ເບິ່ງຮ່ວມກັນ ຫຼື Jamboard.

## ວຽກບ້ານ (ຖ້າມີ)

ບໍ່ມີ

ດັດແປງມາຈາກ: ການສະໜັບສະໜູນສຳລັບຊາວໜຸ່ມ. ຫຼັກສູດຊັ້ນອະນຸບານ ເຖິງ ມັດທະຍົມສຶກສາປີທີ 7 ກ່ຽວກັບສິດທິ, ຄວາມເຄົາລົບ, ຄວາມຮັບຜິດຊອບ, ການຢືນຢັດເພື່ອຕໍ່ຕ້ານການຂົ່ມເຫັງ ແລະ ອຸຍແນສໂກ ແລະ ຄະນະ. ການເຊື່ອມຕໍ່ກັບຄວາມເຄົາລົບ. ຜົນກະທົບຈາກຄວາມຮຸນແຮງທາງເພດ.

# ເອກະສານ

ສຳລັບແຈກຢາຍນັກຮຽນ

**ຕົວຢ່າງຂອງການຂົ່ມເຫງ**




# ເອກະສານ

ສຳລັບແຈກຢາຍນັກຮຽນ

**ຕົວຢ່າງຂອງການຂົ່ມເຫງ**




# ແຜ່ນວຽກບົດຝຶກຫັດ
## ສໍາລັບນັກຮຽນ

### ການຂົ່ມເຫງ

**ຊື່:**

**ວັນທີ:**

**ຄໍາແນະນໍາ: ຈົ່ງຕອບຄໍາຖາມລຸ່ມນີ້ ແລະ ສົ່ງຄືນໃຫ້ຄູກ່ອນອອກຈາກຫ້ອງຮຽນ.**

1. **ການຂົ່ມເຫງແມ່ນຫຍັງ?**

2. **ໃຫ້ໝາຍປະເພດຂອງການຂົ່ມເຫັງສາມປະເພດ:**

- ☐ ການຂົ່ມເຫງດ້ວຍການກະທໍາ
- ☐ ການຂົ່ມເຫັງໃນລະດັບທີ່ສູງກວ່າ
- ☐ ການຂົ່ມເຫັງໃນລະດັບທີ່ຕໍ່າກວ່າ
- ☐ ການຂົ່ມເຫັງທາງອິນເຕີເນັດ
- ☐ ການຂົ່ມເຫັງແບບບໍ່ໃຫ້ຄວາມສົນໃຈ
- ☐ ການຂົ່ມເຫັງແບບໃໝ່

3. **ສິ່ງໜຶ່ງທີ່ເຈົ້າຈະສາມາດເຮັດໄດ້ ຖ້າວ່າເຈົ້າຖືກຂົ່ມເຫັງ ແມ່ນຫຍັງ?**

4. **ສິ່ງໜຶ່ງທີ່ເຈົ້າຈະສາມາດເຮັດໄດ້ ຖ້າວ່າເຈົ້າເຫັນຄົນອື່ນຖືກຂົ່ມເຫັງ ແມ່ນຫຍັງ?**